Co-funded by the European Union

DX.sea

# ນຳສະເໜີກ່ຽວກັບຄວາມເຂົ້າໃຈຂອງລະບົບ ການຈັດການການຮຽນ (LMS) ແລະ ສິ່ງທ້າທາຍ ສຳລັບການພິຈາລະນາໃນໂຄງສ້າງພື້ນຖານດິຈິຕອນ ແລະ ການຈັດຕັ້ງປະຕິບັດ LMS

Co-funded by the European Union

DX.sea

## ກ່ຽວກັບລະບົບການຈັດການການຮຽນການສອນ (LMS)

ລະບົບການຈັດການສື່ການຮຽນການສອນ(LMS) ແມ່ນຊອບແວທີ່ໃຊ້ສຳລັບຕິດຕາມການຮຽນການສອນແບບປະສົມປະສານ ແລະ ການສຶກສາທາງໄກ ໂດຍສະເພາະການສຶກສາລະດັບສູງຂຶ້ນໄປ ແລະ ໃຊ້ສຳລັບຝຶກອົບຮົມພະນັກງານພາຍໃນອົງກອນໃດໜຶ່ງ

Sources: TechRepublic, “Introduction to LMS and its Importance in Modern Education,” 2022 UNESCO, “LMS Systems and Online Learning,” 2021

Co-funded by the European Union

DX.sea

## ກ່ຽວກັບລະບົບການຈັດການການຮຽນການສອນ (LMS)

- ແພລດຟອມຊອບແວທີ່ໃຊ້ສຳລັບການສ້າງ, ຈັດການ, ແລະ ນຳສົ່ງເນື້ອຫາການຮຽນການສອນແບບອອນລາຍ
- ເຄື່ອງມືທີ່ຊ່ວຍໃນການບໍລິຫານ, ຕິດຕາມ, ແລະ ລາຍງານກິດຈະກຳການຮຽນການສອນ
- ລະບົບທີ່ເຊື່ອມຕໍ່ລະຫວ່າງຄູອາຈານ, ນັກຮຽນ, ແລະ ຜູ້ບໍລິຫານ

Co-funded by the European Union

DX.sea

## ຄຸນລັກສະນະສຳຄັນຂອງ LMS

- ສາມາດອັບໂຫຼດ, ຈັດການ, ແລະ ແຈກຢາຍເນື້ອຫາການຮຽນຮູ້
- ສ້າງແບບທົດສອບ, ການບ້ານ, ແລະ ການປະເມີນຜົນ
- ຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງນັກຮຽນ
- ມີຊ່ອງທາງສົນທະນາ, ກະດານສົນທະນາ, ແລະ ການແຈ້ງເຕືອນ
- ສະໜັບສະໜູນການເຮັດວຽກຮ່ວມກັນລະຫວ່າງນັກຮຽນ ແລະ ຄູອາຈານ

Co-funded by the European Union

DX.sea

## ຄຸນປະໂຫຍດຂອງ LMS

- ການເຂົ້າເຖິງການສຶກສາບໍ່ຈຳກັດສະຖານທີ່ ແລະ ເວລາ
- ປະຫຍັດຄ່າໃຊ້ຈ່າຍໃນການຈັດການຫຼັກສູດການສອນ
- ສະໜັບສະໜູນຮູບແບບການຮຽນຮູ້ທີ່ແຕກຕ່າງກັນ
- ປັບປຸງປະສິດທິພາບການບໍລິຫານຈັດການການສຶກສາໃຫ້ມີຄວາມທັນສະໄໝຂຶ້ນ

Co-funded by the European Union

DX.sea

# ສິ່ງທ້າທາຍດ້ານໂຄງລ່າງພື້ນຖານ

- ຍັງມີຂໍ້ຈຳກັດໃນການເຊື່ອມຕໍ່ໂດຍສະເພາະເຂດຊົນນະບົດ ຫຼື ເຂດຫ່າງໄກ
- ຄວາມສະຖຽນຂອງລະບົບໄຟຟ້າຕ້ອງສະຖຽນແລະຮອງຮັບຄົນເຂົ້າລະບົບ 24 ຊົ່ວໂມງ
- ການເຂົ້າເຖິງຄອມພິວເຕີ, ແທັບເລັດ, ຫຼື ສະມາດໂຟນທີ່ຈຳກັດ
- ການຮັກສາຄວາມປອດໄພຂອງຂໍ້ມູນ ແລະ ລະບົບເຄືອຂ່າຍຕ້ອງເຂັ້ມແຂງ

Co-funded by the European Union

DX.sea

# ສິ່ງທ້າທາຍດ້ານການຈັດຕັ້ງປະຕິບັດ

- ຜູ້ໃຊ້ຈຳນວນຫຼາຍຍັງຂາດທັກສະໃນການນຳໃຊ້ເຕັກໂນໂລຊີດິຈິຕອນ
- ດ້ານງົບປະມານຍັງຈຳກັດ ໂດຍການລົງທຶນໃສ່ລະບົບ LMS ແລະ ໂຄງລ່າງພື້ນຖານ
- ການພັດທະນາເນື້ອຫາການຮຽນການສອນເປັນພາສາລາວຍັງມີໜ້ອຍ
- ການຝຶກອົບຮົມໃຫ້ແກ່ຄູ ແລະ ຜູ້ບໍລິຫານການສຶກສາຍັງບໍ່ທັນທົ່ວເຖິງ
- ການປ່ຽນແປງຈາກການຮຽນແບບເກົ່າ ຍັງບໍ່ທັນຖືກຍອມຮັບເທື່ອ

Co-funded by the European Union

DX.sea

## ສິ່ງທ້າທາຍດ້ານນະໂຍບາຍ ແລະ ການວາງແຜນ

- ຕ້ອງພັດທະນາຍຸດທະສາດດິຈິຕອນສຳລັບການສຶກສາໃນລາວ
- ຕ້ອງກຳນົດມາດຕະຖານສຳລັບການຮຽນຮູ້ແບບອອນລາຍ
- ຕ້ອງມີການປະສານງານລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງ
- ຕ້ອງມີການພັດທະນາກົດໝາຍທີ່ກ່ຽວຂ້ອງກັບການສຶກສາແບບດິຈິຕອນ

Co-funded by the European Union

DX.sea

## ຂໍ້ພິຈາລະນາສຳລັບການນຳໃຊ້ LMS ໃນ ສປປ ລາວ

- ເລືອກລະບົບທີ່ເໝາະສົມກັບສະພາບແວດລ້ອມຂອງແຕ່ລະທ້ອງຖິ່ນ
- ເປັນລະບົບທີຮອງຮັບພາສາລາວ ແລະ ພາສາອື່ນໆ
- ມີການຝຶກອົບຮົມສຳລັບຄູອາຈານ, ນັກຮຽນ, ແລະ ຜູ້ບໍລິຫານ
- ມີການວາງແຜນການນຳໃຊ້ເປັນຂັ້ນຕອນເປັນໄລຍະໆ

Co-funded by the European Union

DX.sea

## ແນວທາງການພັດທະນາໃນອະນາຄົດ

- ການເຊື່ອມໂຍງກັບເຕັກໂນໂລຊີໃໝ່ເຊັ່ນ ປັນຍາປະດິດ (AI), ແລະ ໂລກສະເໝືອນຈິງ (VR)
- ການສະໜັບສະໜູນການຮຽນຮູ້ຕະຫຼອດຊີວິດສໍາລັບທຸກເພດທຸກໄວ
- ການຮ່ວມມືລະຫວ່າງປະເທດເພື່ອແລກປ່ຽນຄວາມຮູ້ ແລະ ປະສົບການ
- ການພັດທະນາອຸດສາຫະກໍາເຕັກໂນໂລຊີການສຶກສາທ້ອງຖິ່ນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ

Co-funded by the European Union

DX.sea

## ສະຫຼຸບ

- LMS ມີຄວາມສຳຄັນຕໍ່ການປັບປຸງຄຸນນະພາບການສຶກສາໃນຍຸກດິຈິຕອນ
- ການນຳໃຊ້ LMS ໃນ ສປປ ລາວ ຍັງປະເຊີນກັບສິ່ງທ້າທາຍຫຼາຍດ້ານ
- ການວາງແຜນຢ່າງລະອຽດ, ການລົງທຶນທີ່ເໝາະສົມ, ແລະ ການພັດທະນາເປັນຂັ້ນຕອນຍັງມີຄວາມສຳຄັນຫຼາຍ
- ສ້າງແຜນຍຸດທະສາດທີ່ເໝາະສົມ, ລະບົບການສຶກສາດິຈິຕອນທີ່ສາມາດປັບປຸງໂອກາດການເຂົ້າເຖິງການສຶກສາສຳລັບປະຊາຊົນລາວໃຫ້ຫຼາຍຂຶ້ນ

# Thank You